| ການຊ່ວຍເຫລືອເງິນ ແລະ ອາຫານຂອງທ່ານ<br>ສິດທິ ແລະ ຄວາມຮັບຜິດຊອບ<br>**Your Cash and Food Assistance Rights and Responsibilities** | ຊື່ຂອງລູກຄ້າ (ຫົວຫນ້າຄອບຄົວ) |
|---|---|
| | ເລກ ID ຂອງລູກຄ້າ |

## ຄວາມຮັບຜິດຊອບຂອງທ່ານ (ທ່ານຕ້ອງ)

- **ເອົາໃຫ້ພວກເຮົາຮາຍລະອຽດທີ່ພວກເຮົາຕ້ອງການເພື່ອຈະຕັດສິນວ່າທ່ານມີເງື່ອນໄຂໄດ້ຮັບ ຫລື ບໍ່.**
- **ເອົາໃຫ້ພວກເຮົາ ຫລັກຖານເມື່ອເວລາຕ້ອງການ.** ພວກເຮົາຈະອາດຈະສາມາດເອົາໃຫ້ທ່ານໄດ້. ຮາຍລະອຽດທີ່ທ່ານເອົາໃຫ້ກົມຈະຖືກພິສູດໂດຍເຈົ້າຫນ້າທີ່ຂອງຣັດຖະບານກາງ ແລະ ຂອງຣັດ. ຫລັກຖານສາມາດລວມເອົາການຕິດຕໍ່ຕິດຕາມມາຈາກພະນັກງານຂອງກົມລວມທັງນັກສືບສວນການສໍ ໂກງ.
- **ຣາຍລະອຽດທີ່ຖືກລາຍງານໃຫ້ກົມສັງຄົມສົງເຄາະແລະສາທາຣະນະສຸກ** ອາດຈະສະທ້ອນເຖິງເງື່ອນໄຂຮັບເອົາການຄຸ້ມກັນການປິ່ນປົວສຸຂະພາບທີ່ຖືກປົກຄອງໂດຍ Health Care Authority ແລະ Health Benefit Exchange.
- **ລາຍງານການປ່ຽນແປງ** (ເຊັ່ນວ່າທີ່ຢູ່,ຣາຍໄດ້,ອື່ນໆ) ຕາມທີ່ຖືກກຳນົດໄວ້ຢູ່ໃນກົດຫມາຍ WAC 388-418-0005. ໃຫ້ລາຍງານການປ່ຽນແປງກ່ອນວັນທີ 10 ຂອງເດືອນຕໍ່ມາ.
- **ຮ່ວມມືນຳພະແນກເກັບເງິນລ້ຽງລູກ (Division of Child Support, DCS)** ຖ້າຫາກວ່າທ່ານຮັບເອົາເງິນ TANF. ທ່ານຕ້ອງຊ່ວຍເຫລືອພະແນກ DCS ກໍ່ຕັ້ງ, ດັດແປງ, ຫລື ບັງຄັບເກັບເງິນລ້ຽງລູກສຳລັບເດັກນ້ອຍຢູ່ໃນການເບິ່ງແຍງດູແລຂອງທ່ານ, ແລະ ກໍ່ຕັ້ງສາຍເລືອດພໍ່ລູກ (ຖ້າຈຳເປັນ). ທ່ານຈະປະຕິເສດທີ່ຈະຮ່ວມມືນຳພະແນກ DCS ໄດ້ຖ້າຫາກວ່າທ່ານສາມາດສະແດງໃຫ້ເຫັນວ່າທ່ານມີເຫດຜົນດີທີ່ຈະເຊື່ອວ່າການຮ່ວມມືນຳພະແນກ DCS ຈະເອົາທ່ານ, ລູກຂອງທ່ານ, ຫລື ເດັກນ້ອຍຢູ່ໃນການເບິ່ງແຍງດູແລຂອງທ່ານໃສ່ໃນການສ່ຽງອັນຕະຣາຍຈາກພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.
- **ຮ້ອງຂໍເອົາ** ແລະ ທຳຄວາມພະຍາຍາມອັນເຫມາະສົມເພື່ອຈະມີຣາຍໄດ້ທີ່ອາດເປັນໄປໄດ້ຈາກບ່ອນມາບ່ອນອື່ນເມື່ອທ່ານຮ້ອງຂໍເອົາ ຫລື ຮັບເອົາການຊ່ວຍເຫລືອເງິນສົດ.
- **ປະກອບໃບລາຍງານ ແລະ ໃບທວນຄືນທີ່ຖືກກຳນົດໄວ້ໃຫ້ແລ້ວ.**
- **ປະຕິບັດຕາມກົດກຳນົດວຽກງານ** ສຳລັບການຊ່ວຍເຫລືອເງິນ ແລະ ການຊ່ວຍເຫລືອອາຫານ.
- **ບອກພວກເຮົາ** ຖ້າຫາກວ່າທ່ານຢາກໃຫ້ຄົນໃດຄົນນຶ່ງອີກທີ່ຈະໃຊ້ການຊ່ວຍເຫລືອອາຫານຂອງທ່ານໃນນາມຂອງທ່ານ.
- **ຮ່ວມມືນຳການກວດເບິ່ງຄືນໃນການຄວບຄຸມຄຸນນະພາບຂອງພວກເຮົາ.**
- **ໃຊ້ການຊ່ວຍເຫລືອອາຫານ** ເພື່ອຈະຊື້ເອົາອາຫານສຳລັບສະມາຊິກຄອບຄົວຂອງທ່ານເທົ່ານັ້ນ.
- **ໃຊ້ການຊ່ວຍເຫລືອເງິນສົດ** ສຳລັບຜົນປະໂຍດຂອງສະມາຊິກຄອບຄົວທ່ານເທົ່ານັ້ນ.
- **ທ່ານຕ້ອງເອົາເລກຄວາມປອດພັຍສັງຄົມໃຫ້ (SSN)** ຫລື ສະພາບການເຂົ້າເມືອງເທົ່ານັ້ນສຳລັບບຸກຄົນຜູ້ທີ່ຂໍເອົາການຊ່ວຍເຫລືອ. ຖ້າຫາກວ່າທ່ານເລືອກທີ່ຈະບໍ່ເອົາເລກ SSN ຫລື ສະພາບການເຂົ້າເມືອງໃຫ້ ສຳລັບສະມາຊິກຄອບຄົວຜູ້ທີ່ບໍ່ໄດ້ຂໍເອົາ, ຣາຍໄດ້ ແລະ ຊັບສົມບັດຂອງສະມາຊິກຄອບຄົວທຸກໆຄົນຜູ້ທີ່ບໍ່ໄດ້ຂໍເອົາ ຍັງຈະຕ້ອງຖືກພິສູດຢູ່, ຖ້າຕ້ອງການ, ເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ.

## ສິດທິຂອງທ່ານ (ພວກເຮົາຕ້ອງ)

- **ຮັບເອົາຄຳຮ້ອງ** ທີ່ມີຊື່, ທີ່ຢູ່, ແລະ ລາຍເຊັນຂອງທ່ານ ຫລື ລາຍເຊັນຂອງຜູ້ຕາງຫນ້າທີ່ຖືກອະນຸຍາດຂອງທ່ານ.
- **ຊ່ວຍທ່ານຂຽນປະກອບໃບຟອມຂອງ DSHS.**
- **ດຳເນີນ** ຄຳຮ້ອງຂໍເອົາການຊ່ວຍເຫລືອອາຫານຂອງທ່ານພາຍໃນ 7 ວັນ ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການບໍຣິການຮີບດ່ວນ.
- **ເອົາໃບຮັບໃຫ້ທ່ານ** ຖ້າຫາກວ່າທ່ານຂໍເອົາເມື່ອເວລາທ່ານສົ່ງເອກສານມາໃຫ້.
- ເອົາຫນັງສືຕັດສິນໃຫ້ທ່ານ, ໃນກໍຣະນີສ່ວນຫລາຍ, ພາຍໃນ 30 ວັນ.
- **ທ່ານຈະປະຕິເສດທີ່ຈະເວົ້ານຳນັກສືບສວນການສືບຫາການສໍໂກງໃນຂັ້ນເລີ້ມແຮກ** (FRED) ຈາກຫ້ອງການເຣື່ອງການສໍ ໂກງ ແລະການຮັບຜິດຊອບ. ທ່ານບໍ່ຕ້ອງປ່ອຍໃຫ້ນັກສືບສວນເຂົ້າມາໃນເຮືອນຂອງທ່ານ. ທ່ານຈະຂໍໃຫ້ນັກສືບສວນກັບຄືນມາໃຫມ່ໃນເວລາອື່ນໄດ້. ອັນນີ້ຈະບໍ່ສະທ້ອນເຖິງເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານ.
- **ທ່ານຈະຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງໄດ້** ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳການຕັດສິນທີ່ກົມໄດ້ເຮັດໃສ່ສຳນວນເອກສານຂອງທ່ານ. ທ່ານຍັງຈະຂໍໃຫ້ຜູ້ຄວບຄຸມງານ ຫລື ຜູ້ປົກຄອງທີ່ຈະກວດເບິ່ງຄືນໃນຄຳຕັດສິນ ຫລື ການກະທຳທີ່ຂັດແຍ້ງກັນໂດຍບໍ່ຕ້ອງໄດ້ສະທ້ອນເຖິງສິດທິຂອງທ່ານໃນການຟັງເຣື່ອງຈາກອຳນາດການປົກຄອງ.
- **ພວກເຮົາຕ້ອງໄດ້ແຈ້ງບອກທ່ານ** ກ່ຽວກັບກົດຣະບຽບຂອງຂອບເຂດເວລາ 60-ເດືອນພາຍໃຕ້ໂຄງການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF). ຂອບເຂດເວລາອັນນີ້ບໍ່ກ່ຽວນຳການຊ່ວຍເຫລືອອາຫານຈຳເປັນຂອງທ່ານ ຫລື ໂຄງການລູດເງິນຄ່າຝາກລູກ.

## ສິ່ງທີ່ທ່ານຄວນຈະຮູ້ຈັກກ່ຽວກັບບັດ EBT ຂອງທ່ານ

- **ການໃຊ້ການຊ່ວຍເຫລືອໄປໃນທາງຜິດ:** ການຊ່ວຍເຫລືອອາຫານ ແລະ ເງິນສົດທີ່ຖືກແຈກຢາຍໃຫ້ໂດຍຜ່ານບັດ EBT ຈະເອົາໃຫ້ກົມ DSHS ປະວັດຂອງການຝາກຖອນຢູ່ບ່ອນທີ່ທ່ານໃຊ້ການຊ່ວຍເຫລືອຂອງທ່ານ. ກົມຈະໃຊ້ຮາຍລະອຽດຂອງການຝາກຖອນໃນການສືບສວນກ່ຽວກັບການໃຊ້ການຊ່ວຍເຫລືອເງິນສົດໄປໃນທາງຜິດ ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບເງິນສົດ ຫລື ສິ່ງຂອງມີຄຸນຄ່າແນວອື່ນ (ການຄ້າຂາຍຜິດກົດຫມາຍ)
- **ການເຮັດບັດ EBT ໃບໃຫມ່ແທນ:** ພວກເຮົາຈະເກັບເອົາເງິນສຳລັບການເຮັດບັດ EBT ໃບໃຫມ່ແທນ. ເກັບຮັກສາບັດ EBT ຂອງທ່ານໄວ້ ແລະ ເລກປະຈຳຕົວສ່ວນຕົວ (PIN) ຂອງທ່ານໄວ້ໃຫ້ປອດພັຍ ແລະ ບໍ່ໃຫ້ໃຜຮູ້ຈັກ.
- **ບັດ EBT ທີ່ມີຈຳນວນຍັງເຫລືອສູງ:** ຖ້າຫາກວ່າທ່ານບໍ່ໃຊ້ການຊ່ວຍເຫລືອຂອງທ່ານເປັນເວລາຫລາຍເດືອນຕໍ່ເທື່ອນຶ່ງ ຫລື ສະສົມຈຳນວນຍັງເຫລືອສູງຫລັງຈາກຫລາຍໆເດືອນ, ພວກເຮົາອາດຈະຕິດຕໍ່ໄປຫາທ່ານເພື່ອຈະກວດເບິ່ງສະພາບການ ຫລື ຄວາມຕ້ອງການສຳລັບການຊ່ວຍເຫລືອຂອງທ່ານຄືນ.

## ສິ່ງທີ່ທ່ານຄວນຈະຮູ້ຈັກ (ອາຫານຈຳເປັນ)

- **ພວກເຮົາສົ່ງຣາຍລະອຽດ** ກ່ຽວກັບບຸກຄົນທີ່ຮ້ອງຂໍເອົາການຊ່ວຍເຫລືອອາຫານຈຳເປັນໄປຫາຫ້ອງການຣັດຖະບານກາງບ່ອນອື່ນເພື່ອຈະກວດເບິ່ງວ່າຣາຍລະອຽດນັ້ນຖືກຕ້ອງ ຫລື ບໍ່. ຖ້າຫາກວ່າຣາຍລະອຽດແນວໃດແນວນຶ່ງບໍ່ຖືກຕ້ອງ, ບຸກຄົນຜູ້ທີ່ຮ້ອງຂໍເອົາອາດຈະບໍ່ໄດ້ຮັບອາຫານຈຳເປັນ. ຖ້າຫາກວ່າບຸກຄົນເອົາຣາຍລະອຽດທີ່ເຂົາເຈົ້າຮູ້ຈັກວ່າບໍ່ຖືກຕ້ອງໃຫ້, ເຂົາເຈົ້າສາມາດຖືກຕັດສິນລົງໂທດທາງອາດສະຍາກັມໄດ້. ການປັບໄຫມລົງໂທດສຳລັບການລ່ວງລະເມີດກົດລະບຽບຂອງໂຄງການອາຫານຈຳເປັນໂດຍເຈຕນາຈະແຕກຕ່າງໄປຕັ້ງແຕ່ການຫມົດສິດຈາກໂຄງການ, ໄປຫາການປັບໄຫມ, ຫລື ການຕິດຄຸກທີ່ອາດຈະເປັນໄປໄດ້.
- **ຖ້າຫາກວ່າທ່ານຂາຍ, ພະຍາຍາມທີ່ຈະຂາຍ, ແລກປ່ຽນ ຫລື ບໍຣິຈາກການຊ່ວຍເຫລືອອາຫານຂອງທ່ານ** ສຳລັບແນວໃດແນວນຶ່ງທີ່ມີຄຸນຄ່າເຊັ່ນວ່າເງິນສົດ, ຢາເສບຕິດ, ອາວຸດ, ຫລື ແນວໃດແນວນຶ່ງນອກຈາກອາຫານຈາກຮ້ານຄ້າບ່ອນທີ່ຖືກອະນຸຍາດ (ການຄ້າຂາຍຜິດຕໍ່ກົດຫມາຍ) , ທ່ານອາດຈະຫມົດສິດຈາກການຮັບເອົາການຊ່ວຍເຫລືອອາຫານສຳລັບເວລາຢ່າງຫນ້ອຍນຶ່ງປີໄປຮອດການຫມົດສິດສູງສຸດຕະລອດຊີວິດ ໃນຄວາມຜິດເທື່ອທຳອິດ. ການຫມົດສິດອັນນີ້ດຳເນີນຕໍ່ໄປເຖິງແມ່ນວ່າທ່ານຈະອອກໄປຈາກຣັດວໍຊິງຕັນ ແລະ ຮ້ອງຂໍເອົາການຊ່ວຍເຫລືອຢູ່ໃນຣັດອື່ນ.
- **ຖ້າຫາກວ່າທ່ານຖືກບົ່ງໃຫ້ເຂົ້າຮ່ວມໃນກົດກຳນົດວຽກງານຂອງໂຄງການອາຫານຈຳເປັນ,** ແລະ ຜິດພາດທີ່ຈະເຂົ້າຮ່ວມ, ທ່ານສາມາດຖືກຫມົດສິດສຳລັບນຶ່ງເດືອນ ແລະ ຈົນກວ່າທ່ານຈະຍອມເຮັດຕາມກົດກຳນົດວຽກງານສຳລັບຄວາມຜິດພາດເທື່ອທຳອິດ;ສາມເດືອນ ແລະ ຈົນກວ່າທ່ານຈະຍອມເຮັດຕາມສຳລັບຄວາມຜິດພາດເທື່ອທີສອງ; ແລະ ຫົກເດືອນ ແລະ ຈົນກວ່າທ່ານຈະຍອມເຮັດຕາມສຳລັບຄວາມຜິດພາດເທື່ອທີສາມ ແລະ ແຕ່ລະເທື່ອຫລັງຈາກນັ້ນ.
- **ທ່ານຈະຖືກເອົາອອກຈາກໂຄງການຊ່ວຍເຫລືອອາຫານຈຳເປັນ** ສຳລັບການເຮັດຜິດກົດລະບຽບຂອງໂຄງການອາຫານຈຳເປັນຕາມທີ່ຖືກບັນຣະຍາຍຢູ່ໃນຄຳເຕືອນເຣື່ອງການປັບໄຫມລົງໂທດຂອງການຊ່ວຍເຫລືອອາຫານຈຳເປັນທີ່ຖືກບົ່ງຢູ່ຫນ້ານີ້.
- **ລາຍງານຣາຍຈ່າຍຂອງຄອບຄົວຖ້າຫາກວ່າທ່ານຕ້ອງການໃຫ້ກົມລວມເອົາຄ່າເຫລົ່ານີ້ໃສ່ນຳສຳລັບການຊ່ວຍເຫລືອອາຫານຈຳເປັນ.** ຖ້າຫາກວ່າທ່ານບໍ່ລາຍງານ ແລະ ສົ່ງຫລັກຖານຂອງຣາຍຈ່າຍເຫລົ່ານີ້ມາໃຫ້, ແປວ່າທ່ານບອກວ່າທ່ານບໍ່ຕ້ອງການໃຫ້ພວກເຮົາທີ່ຈະໃຊ້ຣາຍຈ່າຍເຫລົ່ານີ້ເພື່ອຈະຕັດສິນວ່າທ່ານສາມາດໄດ້ຮັບອາຫານຈຳເປັນເພີ້ມເຕີມ ຫລື ບໍ່.

## ສິ່ງທີ່ທ່ານຄວນຈະຮູ້ຈັກ (ເງິນສົດ)

- **ໂດຍການຮັບເອົາການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (Temporary Assistance for Needy Families, TANF)** ທ່ານແຕ່ງຕັ້ງສິດທິໃນເງິນລ້ຽງລູກ ແລະ ເງິນລ້ຽງຄູ່ຜົວເມັຽຂອງທ່ານໃຫ້ແກ່ພະແນກເກັບເງິນລ້ຽງລູກ.  ອັນນີ້ຫມາຍຄວາມວ່າພະແນກ DCS ຈະເກັບຮັກສາເອົາໄວ້ ເງິນລ້ຽງລູກທີ່ຍັງຕິດທ່ານຢູ່, ເທົ່າກັບຈຳນວນຂອງເງິນຊ່ວຍເຫລືອຂອງຫລວງທີ່ທ່ານໄດ້ຮັບ. **ທ່ານຕ້ອງບອກພະແນກ DCS ໂດຍທັນທີໂລດຖ້າຫາກວ່າທ່ານໄດ້ຮັບເງິນຈ່າຍຄ່າລ້ຽງລູກ ຫລື ການຊ່ວຍເຫລືອ** ສຳລັບເດັກນ້ອຍໃນຂະນະທີ່ໄດ້ຮັບເງິນ TANFຢູ່.
- **ຖ້າຫາກວ່າທ່ານຢຸດຮັບເອົາເງິນ TANF**, ທ່ານຕ້ອງໄດ້ບອກພະແນກ DCS ກ່ຽວກັບການປ່ຽນແປງຕ່າງໆທີ່ສະທ້ອນເຖິງເງິນລ້ຽງລູກ, ເຊັ່ນວ່າລູກຍ້າຍເຣືອນ ຫລື ທີ່ຢູ່ຂອງທ່ານປ່ຽນ.
- **ຖ້າຫາກວ່າທ່ານໄດ້ຮັບເງິນ TANF, ທ່ານຈະຮ້ອງຂໍເອົາເງິນພິເສດໄດ້**ເພື່ອຈະຊ່ວຍຈ່າຍສຳລັບຄ່າເຣືອນສຸກເສີນຊົ່ວຄາວ.

ໂດຍອີງຕາມກົດຫມາຍສິດທິພົລເມືອງຂອງຣັຖບານກາງ ແລະ ກົດລະບຽບ ແລະ ນະໂຍບາຍສິດທິພົລເມືອງຂອງກົມກະສິກັມຂອງ U.S.  (USDA), ກົມ USDA, ອົງການ, ຫ້ອງການ ແລະ ພະນັກງານຂອງເຂົາເຈົ້າ, ແລະ ສະຖາບັນທີ່ເຂົ້າຮ່ວມໃນໂຄງການ ຫລື ບໍຣິຫານໂຄງການນີ້ໄດ້ຖືກຫວງຫ້າມຈາກການແບ່ງແຍກຊົນຊັ້ນວັນນະໂດຍອີງໃສ່ພື້ນຖານຂອງຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ສາສະນາ, ເພດ, ເອກະລັກປະຈຳຕົວທາງເພດ (ລວມທັງການສະແດງອອກມາທາງເພດ) , ການປັບຕົວທາງເພດ,  ຄວາມເສັຽອົງຄະ, ອາຍຸ, ສະພາບການແຕ່ງງານ, ສະພາບຂອງຄອບຄົວ/ພໍ່ແມ່, ຣາຍໄດ້ທີ່ໄດ້ຮັບມາຈາກໂຄງການຊ່ວຍເຫລືອຂອງຫລວງ, ຄວາມເຊື່ອຖືທາງດ້ານການເມືອງ, ຫລື ການແກ້ແຄ້ນ ຫລື ການຕອບໂຕ້ສຳລັບກິຈກັມກ່ຽວກັບສິດທິພົລເມືອງໃນຜ່ານມາ, ຢູ່ໃນໂຄງການ ຫລື ກິຈກັມແນວໃດແນວນຶ່ງທີ່ຖືກດຳເນີນການ ຫລື ອອກທຶນໃຫ້ໂດຍກົມ USDA (ບໍ່ແມ່ນວ່າພື້ນຖານທີ່ຖືກຫວງຫ້າມທຸກໆຢ່າງຈະກ່ຽວນຳທຸກໆໂຄງການ) . ວັນທີກຳນົດຕາຍໂຕຂອງການຍື່ນວິທີການແກ້ໄຂ ຫລື ການຮ້ອງທຸກຈະແຕກຕ່າງກັນໄປຕາມໂຄງການ.

ບຸກຄົນທີ່ມີຄວາມເສັຽອົງຄະຜູ້ທີ່ຕ້ອງການວິທີທາງການຕິດຕໍ່ສື່ສານແບບອື່ນສຳລັບຣາຍລະອຽດຂອງໂຄງການ (ຕົວຢ່າງວ່າ, ຕົວຫນັງສືສຳລັບຄົນຕາບອດ, ເອກສານພິມເປັນຕົວໃຫຍ່, ເທັບອັດສຽງ, ພາສາອະເມຣິກັນໃບ້, ອື່ນໆ) ຄວນຈະຕິດຕໍ່ຫາຫ້ອງການທີ່ຮັບຜິດຊອບ ຫລື TARGET Center ຂອງ USDA ໄດ້ທີ່ເລກ (202) 720-2600 (ສຽງເວົ້າ ຫລື TTY) ຫລື ຕິດຕໍ່ຫາ USDA ໂດຍຜ່ານ Federal Relay Service ໄດ້ທີ່ເລກ (800) 877-8339. ນອກຈາກນັ້ນອີກ, ຣາຍລະອຽດກ່ຽວກັບໂຄງການຈະມີໄວ້ໃຫ້ອີກຄືກັນເປັນພາສາອື່ນໆນອກຈາກພາສາອັງກິດ.

ເພື່ອຈະຍື່ນຄຳຮ້ອງທຸກກ່ຽວກັບການແບ່ງແຍກຊົນຊັ້ນວັນນະຂອງໂຄງການ, ຈົ່ງຂຽນປະກອບໃບຟອມການຮ້ອງທຸກເຣື່ອງການແບ່ງແຍກຊົນຊັ້ນວັນນະຂອງ USDA, AD-3027, ພົບເຫັນໄດ້ຢູ່ທາງອອນລາຍນ໌ທີ່ http://www.ascr.usda.gov/complaint_filing_cust.html, ຫລື ຢູ່ຕາມຫ້ອງການ USDA ທຸກໆບ່ອນ, ຫລື ຂຽນຫນັງສືໃສ່ທີ່ຢູ່ໄປຫາ USDA ແລະ ບອກຢູ່ໃນຫນັງສືຣາຍລະອຽດທຸກໆຢ່າງທີ່ຖືກຮ້ອງຂໍເອົາຢູ່ໃນໃບຟອມ. ເພື່ອຈະຮ້ອງຂໍເອົາໃບຟອມການຮ້ອງທຸກ, ຈົ່ງໂທຫາເລກ (866) 632-9992. ສົ່ງໃບຟອມ ຫລື ຫນັງສືທີ່ຖືກຂຽນປະກອບແລ້ວຂອງທ່ານໄປຫາ USDA ໂດຍທາງ:

1. ໄປສະນີທີ່: U.S. Department of Agriculture  
   Office of the Assistant Secretary for Civil Rights  
   1400 Independence Avenue, SW  
   Washington, D.C. 20250-9410;
2. ແຟກຊ໌: (202) 690-7442; ຫລື
3. ທາງອີແມລ໌: program.intake@usda.gov.

USDA ເປັນຜູ້ບໍຣິການ, ນາຍຈ້າງ ແລະ ຜູ້ໃຫ້ຢືມທີ່ໃຫ້ໂອກາດເທົ່າທຽມກັນ.

ໂດຍການເຊັນຊື່ຢູ່ລຸ່ມນີ້,ຂ້າພະເຈົ້າກ່າວວ່າຂ້າພະເຈົ້າໄດ້ມີສິດທິ ແລະ ຫນ້າທີ່ຮັບຜິດຊອບຂອງຂ້າພະເຈົ້າກ່ຽວກັບການຮັບເອົາການຊ່ວຍເຫລືອ ແລະ ໂຄງການຂອງກົມ DSHS ຖືກອະທິບາຍໃຫ້ຂ້າພະເຈົ້າຟັງ. ຂ້າພະເຈົ້າເຂົ້າໃຈວ່າຖ້າຂ້າພະເຈົ້າປະຕິເສດທີ່ຈະເຊັນຊື່ໃສ່ເອກສານອັນນີ້ມັນຈະບໍ່ສະທ້ອນເຖິງເງື່ອນໄຂຮັບການຊ່ວຍເຫລືອຂອງຂ້າພະເຈົ້າແຕ່ວ່າຂ້າພະເຈົ້າຍັງຈະຖືກຖືວ່າຕ້ອງຮັບຜິດຊອບສຳລັບກົດກຳນົດຂອງໂຄງການ ແລະ ຈະຖືກປັບໄຫມລົງໂທດຂອງໂຄງການ ຫລື ອາດສະຍາກັມທີ່ກ່ຽວຂ້ອງນຳ.

| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ | ລາຍເຊັນຂອງຜູ້ຮ້ອງຂໍຮ່ວມກັນ | ວັນທີ |
|---|---|---|---|
| | | | |

ACES ID ຂອງພະນັກງານ DSHS: ☐ ປະຕິເສດທີ່ຈະເຊັນຊື່.